ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ISSN: 2664-6331 Homepage: https://ssj.sjnl.la/
https://doi.org/10.71026/ss.2024.01020




# ຄຸນລັກສະນະຂອງຜູ້ປະກອບການຍິງທີ່ມີຜົນຕໍ່ກັບຄວາມສຳເລັດໃນການປະກອບທຸລະກິດ, ກໍລະນີສຶກສາ: ຈັນທະບູລີ, ສີສັດຕະນາກ, ສີໂຄດຕະບອງ ແລະ ໄຊເສດຖາ

ຂັນປະທິບ ເທບພະວົງສາ, ຈັນປະເສີດ ວົງພູທອນ, ພອນໄຊ ຈັນທະເທບ,
ນ້ອຍບົວສອນ ແກ້ວວົງກົດ ແລະ ຄຳໂກ້ ຈັນທະຣັງມາ
ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
Email: K.thephavongsa@nuol.edu.la

**ຂໍ້ມູນບົດຄວາມ**: ວັນທີສົ່ງ: 20/2/2024 ວັນທີປັບປຸງຄັ້ງທີ: 20/5/2024 ວັນທີຕອບຮັບ 30/6/2024

**ບົດຄັດຫຍໍ້**

ບົດຄົ້ນຄວ້ານີ້ ໄດ້ສຶກສາກ່ຽວກັບຄຸນລັກສະນະຂອງຜູ້ປະກອບການຍິງທີ່ມີຜົນຕໍ່ຄວາມສຳເລັດໃນການປະກອບທຸລະກິດ ໂດຍມີ 2 ຈຸດປະສົງຄື: ສະພາບລວມຂອງຜູ້ປະກອບການຍິງ, ສຶກສາຄຸນລັກສະນະຂອງຜູ້ປະກອບການຍິງທີ່ມີຜົນຕໍ່ກັບຄວາມສຳເລັດໃນການປະ ກອບທຸລະກິດ ຂໍ້ມູນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນສຶກສາແບບພັນລະນາ ແລະ ແບບປະລິມານ ໂດຍນຳໃຊ້ໂປຣແກຣມ SPSS version 26 ເຂົ້ານຳໃຊ້ທາງສະຖິຕິນຳໃຊ້ວິທີຜັນປ່ຽນຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean ), ຄ່າຜັນປ່ຽນມາດຕະຖານ (SD), One-way ANOVA ແ ລ ະ LSD. ຈ າ ກ ການສຶກສາໃນຄັ້ງນີ້ເຫັນວ່າ ຜູ້ຕອບແບບສອບຖາມເປັນເພດຍິງ, ມີອາຍຸລະຫວ່າງ 31-40 ປີ ມີຈຳນວນ 58 ຄົນ, ມີລະດັບການສຶກສາປະລິນຍາຕີ ມີຈຳນວນ 90ຄົນ, ມີສະຖານະແຕ່ງງານຈຳນວນ 158 ຄົນ, ມີແຫຼ່ງເງິນທຶນຕົນເອງ ຈຳນວນ 161 ຄົນ, ໄລຍະເວລາດຳເນີນທຸລະກິດ 5-10 ປີ ຈຳ ນວນ 67 ຄົນ ແລະ ການເຂົ້າຮ່ວມອົບຮົມ ແມ່ນບໍ່ເຄີຍມີຈຳນວນ 150 ຄົນ, ດ້ານຄວາມເຊື່ອໝັ້ນໃນຕົນເອງ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.64, ດ້ານຄວາມອົດທົນ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.71, ດ້ານຄວາມກ້າສ່ຽງຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະ ເລ່ຍ 4.65, ດ້ານການສັງເກດການໄກ ຢູ່ໃນລະ ດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.50, ດ້ານຄວາມສະໝ່ຳສະເໝີ ແລະ ມຸ່ງໝັ້ນໃນການຮຽນຮູ້ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.74 ແລະ ດ້ານຄວາມເປັນຜູ້ນຳ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.74.

**ຄຳສັບສຳຄັນ**: ຜູ້ປະກອບການຍິງ, ຜູ້ປະກອບການ, ແລະ ການປະກອບກິດຈະການ.

# Study the Characteristics of Female Entrepreneurs that Impact Their Business Success, Case Study: Chanthabuly, Sisattanak, Sikhottabong, and Saysettha

Khanpathip THEPHAVONGSA, Chanpaseuth VONGPHOUTHONE, Phonexay CHANTHATHEP, Noybuavone KEOVONGKOD and Khamko CHANTHARANGMA
Faculty of Business and Economics, National University of Laos
Email: K.thephavongsa@nuol.edu.la

**Abstract**

This project studied the topic study the characteristics of female entrepreneurs that impact their business business success case study:chanthabuly, sisattanak, sikhottabong, saysettha. The main objectives were 2 main objectives: to study the overall characteristics of female entrepreneurs; to study the characteristics of female entrepreneurs that impact their business business success; and to study the characteristics of women entrepreneurs that affect business success. The data used in this study were described and analyzed quantitatively using SPSS version 26. The statistical methods used were frequency, percentage, mean, standard deviation (S.D), One-way ANOVA and LSD.

From this study, there were 201 samples of respondents who were female, aged 31-40 years, 58 people, mean 28.9 percent; 90 people had a bachelor's degree, mean 44.8 percent; 158 people were married, mean 78.6 percent; 161 people had their own finances, mean 80.1 percent; 67 people had been in business for 5-10 years, mean 33.3 percent; and 150 people had never participated in training, mean 74.6 percent. In terms of self-confidence, is at the highest level of satisfaction, with an average of 4.64 percent; patience is at the highest level of satisfaction, with an average of 4.71 percent; risk-taking is at the highest level , with an average of 4.65 percent; remote observation is at the highest level , with an average of 4.50 percent; consistency in learning is at the highest level , with an average of 4.74 percent; and leadership is at the highest level , with an average of 4.74 percent.

**Keyword:** Female, entrepreneur, entrepreneurship, striving for success

**ທີ່ມາ ແລະ ຄວາມເປັນມາຂອງບັນຫາ**

ປັດຈຸບັນມີທຸລະກິດໃໝ່ໆເກີດຂຶ້ນຫຼາກຫຼາຍ ແລະ ມັກຈະມີຜູ້ປະກອບການໜ້າໃໝ່ເປັນຜູ້ຍິງແຕ່ກໍຍັງເປັນສັດສ່ວນທີ່ໜ້ອຍມີພຽງແຕ່ 39.9 ສ່ວນຮ້ອຍເທົ່ານັ້ນເມື່ອທຽບກັບທຸລະກິດທີ່ນຳພາໂດຍຜູ້ປະກອບການຜູ້ຊາຍທີ່ມີເຖິງ 60 ສ່ວນຮ້ອຍ (2022) ເຖິງແມ່ນວ່າໂອກາດຂອງຜູ້ຍິງໃນກຸ່ມຄົນທຸລະກິດມີຫຼາຍຂຶ້ນແຕ່ກໍປະຕິເສດບໍ່ໄດ້ວ່າຍັງມີຄວາມທ້າທາຍໃນການບໍລິຫານທຸລະກິດທີ່ອາດຈະຕ້ອງໃຊ້ເຫື່ອແຮງໃນການເອົາຊະນະຄວາມທ້າທາຍທີ່ເກີດຂຶ້ນ.

ປັດຈຸບັນນີ້ ສ.ປ.ປ.ລາວ ໄດ້ໃຫ້ຄວາມສຳຄັນກັບບົດບາດແມ່ຍິງລາວ ເພື່ອເປັນບາດກ້າວໜຶ່ງໃນການພັດທະນາແມ່ຍິງ ເຊິ່ງຈະເຫັນໄດ້ວ່າແມ່ຍິງຈຳນວນບໍ່ໜ້ອຍທີ່ມີຄວາມສາມາດໃນດ້ານນີ້ ແລະ ສາມາດປະກອບທຸລະກິດຂອງຕົນໃຫ້ປະສົບຜົນສຳເລັດໄດ້ເຖິງຈະມີຫຼາຍບັນຫາທີ່ເຂົ້າມາກ່ຽວຂ້ອງແຕ່ກໍຍັງສາມາດຜ່ານຜ່າອຸປະສັກມາໄດ້ ເຊິ່ງການທີ່ຈະເປັນຜູ້ປະກອບການໄດ້ນັ້ນຍັງຕ້ອງມີ ຄວາມຮູ້ຄວາມສາມາດ, ຄວາມອົດທົນສູງ ແລະ ຄວາມເປັນຜູ້ນຳ ເພື່ອຈະໄດ້ບໍລິຫານງານໃຫ້ອອກມາສຳເລັດຜົນ.

ຢ່າງໃດກໍຕາມການທີ່ຈະເປັນຜູ້ປະກອບການຍິງທີ່ດີໄດ້ສິ່ງສຳຄັນປະການໜຶ່ງຄືຈະຕ້ອງມີຄວາມຕັ້ງໃຈສູງທີ່ຈະເປັນຜູ້ປະກອບການເນື່ອງຈາກເປັນຜູ້ປະກອບການຕົນເອງຕ້ອງທຸ້ມເທແຮງງານ ແລະ ແຮງໃຈມະຫາສານ. ດັ່ງນັ້ນ, ຄວາມຕັ້ງໃຈທີ່ຈະເປັນຜູ້ປະກອບການທຸລະກິດຂອງຕົນເອງຄວາມຕັ້ງໃຈທີ່ຈະເປັນຜູ້ປະກອບການຂອງບຸກຄົນເປັນການສະແດງຄວາມມຸ່ງໝັ້ນໃສ່ໃຈໃນການທີ່ຈະເຂົ້າສູ່ອາຊີບຜູ້ປະກອບການເນື່ອງຈາກຄວາມຕັ້ງໃຈເປັນປັດໄຈທີ່ກຳນົດພຶດຕິກຳຂອງບຸກຄົນໄດ້ດີທີ່ສຸດການວິໄຈໃນອາດີດບົ່ງບອກວ່າຄວາມຕັ້ງໃຈເປັນຕົວແປທີ່ສາມາດບອກເຖິງພຶດຕິກຳທີ່ດີໄດ້.

ຈາກເຫດຜົນດັ່ງກ່າວ, ເຮັດໃຫ້ຜູ້ວິໄຈສົນໃຈທີ່ຈະສຶກສາເຖິງ: "ສຶກສາຄຸນລັກສະນະຂອງຜູ້ປະກອບການຍິງທີ່ມີຜົນຕໍ່ກັບຄວາມສຳເລັດໃນການປະກອບທຸລະກິດ" ໂດຍຜູ້ສຶກສາຫວັງວ່າບົດຄົ້ນຄວ້າໃນຄັ້ງນີ້ຈະເປັນປະໂຫຍດໃນການນຳໄປພັດທະນາສັກກາຍະພາບຂອງຜູ້ປະກອບການທີ່ຈະສາມາດພັດທະນາທຸລະກິດຂອງຕົນເອງໃຫ້ເຕີບໂຕ ແລະ ສາມາດຍົກລະດັບກິດຈະການຂອງຕົນເອງ ພ້ອມທັງເພີ່ມສັກກາຍະພາບທາງທຸລະກິດໃຫ້ດີຂຶ້ນ ແລະ ເປັນຂໍ້ມູນເພື່ອປະກອບການວາງແຜນການພັດທະນາເພື່ອກຽມຄວາມພ້ອມໃນດ້ານທັກສະ, ຄວາມຮູ້ຄວາມສາມາດຄຸນລັກສະນະຂອງການເປັນຜູ້ປະກອບການໃຫ້ມີສັກກາຍະພາບ ແລະ ມີປະສິດທິພາບໃນການບໍລິຫານຈັດການໃຫ້ດີຍິ່ງຂຶ້ນ.

**ຈຸດປະສົງຂອງການຄົ້ນຄວ້າ**

- ສຶກສາສະພາບລວມຂອງຜູ້ປະກອບການຍິງ
- ສຶກສາຄຸນລັກສະນະຂອງຜູ້ປະກອບການຍິງທີ່ມີຜົນຕໍ່ກັບຄວາມສຳເລັດໃນການປະກອບທຸລະກິດ.

**ທົບທວນເອກະສານ**

ເນື້ອໃນບົດນີ້ຈະໄດ້ກ່າວເຖິງທິດສະດີ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງເຊັ່ນ: ການສຶກສາຫົວຂໍ້: "ສຶກສາຄຸນລັກສະນະຂອງຜູ້ປະກອບການຍິງທີ່ມີຜົນຕໍ່ກັບຄວາມສຳເລັດໃນການປະກອບທຸລະກິດ" ໃນການສຶກສາຄັ້ງນີ້ແມ່ນໄດ້ນຳໃຊ້ບັນດາບົດຄົ້ນຄວ້າ, ບົດວິໄຈ ແລະ ບັນດາທິດສະດີຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນແຫຼ່ງຂໍ້ມູນການອ້າງອີງ ແລະ ເປັນແນວທາງໃນການດຳເນີນກາສຶກສາເຊິ່ງມີທິດສະດີກ່ຽວກັບຜູ້ປະກອບການ, ທິດສະດີກ່ຽວກັບປັດໄຈຂອງຄວາມສຳເລັດ ແລະ ທິດສະດີກ່ຽວກັບການວາງແຜນ.

ດ້ານການຄົ້ນຄວ້າທີ່ກ່ຽວຂ້ອງ ຜູ້ສຶກສາໄດ້ທົບທວນຄືຄຳເກີດ ພົມມະຈັນ ແລະ ມະລິສາ ຄົນທະວົງ (2022) "ສຶກສາຄຸນລັກສະນະຂອງຜູ້ປະກອບການທີ່ມີຜົນຕໍ່ຄວາມສຳເລັດໃນການດຳເນີນທຸລະກິດຮ້ານຂາຍຊີ້ນສົດ ກໍລະນີສຶກສາ: "ຮ້ານ CP Fresh Shop ໃນ

ນະຄອນຫຼວງວຽງຈັນ"

ຄໍາມະນີ ໄຊຍະສຸກ ແລະ ສີລິນທອນ ພະໄຊຍະວົງ (2020) "ປັດໄຈທີ່ມີຜົນຕໍ່ຄວາມຕັ້ງໃຈໃນການເປັນຜູ້ປະກອບການທຸລະກິດ Business-Startup ຂອງນັກສຶກສາປີທີ 2 ຫາ ປີທີ 4 ສົກສຶກສາ 2019-2020 ພາກວິຊາບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ"

ເດີ່ນ ອິນທະວົງ ແລະ ບຸນສຸກ ສົມປະເສີດ (2021) "ສຶກສາຄວາມຕັ້ງໃຈ ແລະ ຄວາມສາມາດທີ່ຈະເປັນຜູ້ປະກອບການຂອງນັກສຶກສາ ພາກວິຊາບໍລິຫານທຸລະກິດ"

ນັດທະນາລີ ປິຕິທະນາການ (2017) "ລັກສະນະຂອງຜູ້ປະກອບການທີ່ມີຜົນກະທົບຕໍ່ຄວາມສໍາເລັດ ຜູ້ປະກອບການທຸລະກິດໂຮງແຮມສາມດາວ"

ວັນນິສາ ໂຊດພົມມະອານັນ (2014) "ຄຸນລັກສະນະຂອງຜູ້ປະກອບການທີ່ມີຕໍ່ຄວາມສໍາເລັດໃນການດໍາເນີນທຸລະກິດຂອງຜູ້ປະກອບການຮ້ານຄ້າໃນຕະຫຼາດນໍ້າ"

ສຸວິມົນ ມະທຸລົດ (2020) "ປັດໄຈຄວາມສໍາເລັດຂອງຜູ້ປະກອບການທຸລະກິດຂະໜາດກາງ ແລະ ຂະໜາດຍ່ອຍ"

ວະໄລລັກ ອິນທະສິດ ແລະ ສຸດາລັດ ພົວໂສດາລິດ (2023) "ສຶກສາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເລີ່ມຂາຍເຄື່ອງອອນລາຍຂອງເພດຍິງ ກໍລະນີ້ສຶກສາ: ນະຄອນຫຼວງວຽງຈັນ"

ພຣະ ບຸນໄຊ ທໍາມະວົງ, ຢີວເຣີ ຊົງເຈ່ຍ ແລະ ໄມຫວ່າງ (2018) "ສຶກສາການປະກອບການຂອງຮ້ານຂາຍເຄື່ອງກອງບຸນ ໃນເມືອງ ຈັນທະບູລີ ແລະ ເມືອງສີສັດຕະນາກ".

ພຣະ ພູມິນ ໄຊຍະຈັກ (2016) "ສຶກສາການບໍລິຫານຂອງຜູ້ປະກອບກິດຈະການ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ເມືອງປາກເຊ".

ສຸພາເພັດ ແກ້ວບັນດິດ ແລະ ສຸກສາຄອນ ຈັນທະວິໄຊ (2013) "ສຶກສາຄວາມສົນໃຈຂອງຜູ້ປະກອບການທຸລະກິດມີນິມາກຕໍ່ກັບເງິນກູ້ໝູນວຽງຂອງທະນາຄານການຄ້າຕ່າງປະເທດລາວ ກໍລະນີສຶກສາ: ເມືອງ ສີສັດຕະນາກ".

ຜ່ານການຄົ້ນຄວ້າບົດວິໄຈທີ່ກ່ຽວຂ້ອງເຫັນວ່າມີທັງຈຸດທີ່ຄ້າຍຄືກັນ ແລະ ແຕກຕ່າງກັນກັບບົດຂອງຜູ້ຄົ້ນຄວ້າເຊັ່ນ: ຈຸດທີ່ຄ້າຍຄືກັນແມ່ນເຫັນໄດ້ວ່າແຕ່ລະບົດຄົ້ນຄວ້າມີການສຶກສາຄຸນລັກສະນະຂອງຜູ້ປະກອບການທີ່ປະສົບຜົນສໍາເລັດເຊັ່ນ: ອາຍຸ, ລະດັບການສຶກສາ, ສະຖານະພາບ, ໄລຍະດໍາເນີນທຸລະກິດ . ສ່ວນຈຸດທີ່ແຕກຕ່າງກັນແມ່ນເຫັນວ່າແຕ່ລະບົດທີ່ກ່ຽວຂ້ອງແມ່ນສຶກສາຄຸນລັກສະນະຜູ້ປະກອບການທັງເພດຊາຍ ແລະ ເພດຍິງ, ແຍກທຸລະກິດທີ່ແຕກຕ່າງກັນ, ມີທັງທຸລະກິດຮ້ານອາຫານທົ່ວໄປຕາມຕະຫຼາດທີ່ບໍ່ມີທະບຽນ, ທຸລະກິດທີ່ເປັນສາຂາຍ່ອຍ ແລະ ທຸລະກິດອື່ນໆ ແຕ່ບົດນີ້ຈະເນັ້ນສຶກສາແຕ່ສະເພາະຜູ້ປະກອບການເພດຍິງທີ່ປະສົບຜົນສໍາເລັດ ແຕ່ໃນບົດຄົ້ນຄວ້ານີ້ແມ່ນໄດ້ນໍາໃຊ້ ໂປຣແກຣມ SPSS version 26 ວິເຄາະທາງສະຖິຕິ One-Way ANOVA ໃນການຄໍານວນ.

**ວິທີການສຶກສາ**

ການສຶກສາໃນຄັ້ງນີ້ແມ່ນການສຶກສາແບບປະລິມານ ແລະ ແບບຄຸນນະພາບ ໂດຍໄດ້ສຶກສາຈາກບັນດາທິດສະດີ ແລະ ບົດຄົ້ນຄວ້າຕ່າງໆທີ່ກ່ຽວຂ້ອງເພື່ອນໍາມາເປັນແນວທາງໃນການວາງກອບແນວຄວາມຄິດໃຫ້ສອດຄ່ອງກັບຈຸດປະສົງຂອງການສຶກສາ. ຮູບແບບການສຶກສາແມ່ນແບບສໍາຫຼວດ ໂດຍການລົງສຸ່ມຕົວຢ່າງຜູ້ປະກອບການຍິງທີ່ອາໄສຢູ່ເມືອງ ຈັນທະບູລີ, ສີສັດຕະນາກ, ສີໂຄດຕະບອງ ແລະ ໄຊເສດຖາ, ນະຄອນຫຼວງວຽງຈັນ ເຊິ່ງຜູ້ສຶກສາໄດ້ໃຊ້ແບບສອບຖາມ ເປັນເຄື່ອງມືໃນການຮວບຮວມຂໍ້ມູນ, ວິທີການວິເຄາະແບບພັນລະນາ ແລະ ວິເຄາະດ້ວຍໂປຣແກຣມທາງຄອມພິວເຕີ.

**ຜົນການວິເຄາະຂໍ້ມູນ**

**ສະພາບລວມຂອງຜູ້ປະກອບການຍິງ**

ຈາກການສຶກສາໃນຄັ້ງນີ້ເຫັນວ່າມີ ກຸ່ມຕົວຢ່າງຈໍານວນ 201 ຕົວຢ່າງ ຜູ້ຕອບຕອບແບບສອບຖາມເປັນເພດຍິງ, ມີອາຍຸຊ່ວງລະຫວ່າງ 31-40ປີ ມີຈໍານວນ 58ຄົນ ກວມເອົາ 28.9 ສ່ວນຮ້ອຍ, ມີລະດັບການສຶກສາປະລິນຍາຕີ ມີຈໍານວນ 90ຄົນ ກວມເອົາ 44.8 ສ່ວນຮ້ອຍ, ມີສະຖານະແຕ່ງງານ ຈໍານວນ 158

ຄົນ ກວມເອົາ 78.6 ສ່ວນຮ້ອຍ, ສະຖານທີ່ດຳເນີນທຸລະກິດເມືອງ ສີໂຄດຕະບອງ ມີຈຳນວນ 80 ຄົນ ກວມເອົາ 39.8 ສ່ວນຮ້ອຍ, ມີທຶນຈົດທະບຽນຕ່ຳກວ່າ 100.000.000ກີບ ຈຳນວນ 80 ຄົນ ກວມເອົາ 39.8 ສ່ວນຮ້ອຍ, ມີແຫຼ່ງເງິນທຶນຕົນເອງ ຈຳນວນ 161 ຄົນ ກວມເອົາ 80.1 ສ່ວນຮ້ອຍ, ໄລຍະເວລາດຳເນີນທຸລະກິດ 5-10ປີ ຈຳນວນ 67 ຄົນ ກວມເອົາ 33.3 ສ່ວນຮ້ອຍ, ມີລາຍຮັບຕໍ່ເດືອນ 10.000.000-50.000.000ກີບ ຈຳນວນ 67 ຄົນ ກວມເອົາ 33.3 ສ່ວນຮ້ອຍ, ມີລາຍຈ່າຍຕໍ່ເດືອນ 10.001.000-50.000.000ກີບ ຈຳນວນ 77 ຄົນ ກວມເອົາ 38.3 ສ່ວນຮ້ອຍ, ມີພະນັກງານ 1-5ຄົນ ຈຳນວນ 150 ຄົນ ກວມເອົາ 74.6 ສ່ວນຮ້ອຍ ແລະ ການເຂົ້າຮ່ວມອົບຮົມ ແມ່ນບໍ່ເຄີຍ ມີຈຳນວນ 150 ຄົນ ກວມເອົາ 74.6 ສ່ວນຮ້ອຍ.

**ຄຸນລັກສະນະຂອງຜູ້ປະກອບການຍິງທີ່ສົ່ງຜົນຕໍ່ການປະສົບຜົນສຳເລັດ**

ຜູ້ຕອບແບບສອບຖາມໃຫ້ຄວາມສຳຄັນກ່ຽວກັບຄຸນລັກສະນະຂອງແມ່ຍິງທີ່ມີຜົນຕໍ່ຄວາມສຳເລັດໃນການປະກອບທຸລະກິດດັ່ງນີ້: ດ້ານຄວາມເຊື່ອໝັ້ນໃນຕົນເອງ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.64, ດ້ານຄວາມອົດທົນ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.71, ດ້ານຄວາມກ້າສ່ຽງ ຢູ່ໃນລະດັບຄວາມສຳຄັນທີ່ສຸດ ໂດຍຄ່າສະເລ່ຍ 4.65, ດ້ານການສັງເກດການໄກ ຢູ່ໃນລະດັບຄວາມຄວາມສຳຄັນທີ່ສຸດ ໂດຍຄ່າສະເລ່ຍ 4.50, ດ້ານຄວາມສະໝ່ຳສະເໝີ ແລະ ມຸ່ງໝັ້ນໃນການຮຽນຮູ້ ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.74 ແລະ ດ້ານຄວາມເປັນຜູ້ນຳ ຢູ່ໃນລະດັບຄວາມຄວາມສຳຄັນທີ່ສຸດ ໂດຍຄ່າສະເລ່ຍ 4.74

❖ **ຜົນທົດສອບສົມມຸດຖານ**

- ອາຍຸທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການແຕກຕ່າງກັນໃນດ້ານຄວາມເປັນຕົວຂອງຕົນເອງ, ດ້ານຄວາມອົດທົນ, ດ້ານຄວາມກ້າສ່ຽງ, ດ້ານສັງເກດການໄກ, ດ້ານຄວາມສະໝ່ຳສະເໝີໃນການຮຽນຮູ້ ແລະ ດ້ານຄວາມເປັນຜູ້ນຳ ທີ່ລະດັບຄວາມສຳຄັນ sig<$\alpha$ = 0.05

- ລະດັບການສຶກສາທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການແຕກຕ່າງກັນໃນດ້ານຄວາມເປັນຕົວຂອງຄົນເອງທີ່ລະດັບຄວາມສຳຄັນ sig<$\alpha$ = 0.05

- ສະຖານະພາບທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການບໍ່ແຕກຕ່າງກັນທຸກດ້ານ

- ແຫຼ່ງເງິນທຶນທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການບໍ່ແຕກຕ່າງກັນທຸກດ້ານ

- ໄລຍະດຳເນີນທຸລະກິດທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການແຕກຕ່າງກັນໃນດ້ານຄວາມເປັນຕົວຂອງຄົນເອງ, ດ້ານຄວາມອົດທົນ, ດ້ານຄວາມກ້າສ່ຽງ, ດ້ານສັງເກດການໄກ, ດ້ານຄວາມສະໝ່ຳສະເໝີໃນການຮຽນຮູ້ ແລະ ດ້ານຄວາມເປັນຜູ້ນຳ ທີ່ລະດັບຄວາມສຳຄັນ sig<$\alpha$ = 0.05

- ການເຂົ້າຮ່ວມຝຶກອົບຮົມທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການບໍ່ແຕກຕ່າງກັນທຸກດ້ານ

**ການອະທິບາຍຜົນ**

ຈາກສຶກສາຄຸນລັກສະນະຂອງແມ່ຍິງທີ່ມີຜົນຕໍ່ການປະສົບຜົນສຳເລັດໃນການເຮັດທຸລະກິດ ໂດຍກຸ່ມຕົວຢ່າງແມ່ນແມ່ຍິງທີ່ປະກອບທຸລະກິດ ມີຈຳນວນກຸ່ມຕົວຢ່າງຈຳນວນ 201 ຄົນ, ມີຊ່ວງອາຍຸລະຫວ່າງ 31-40 ປີ, ມີລະດັບການສຶກສາຢູ່ໃນລະດັບປະລິນຍາຕີ, ມີໄລຍະເວລາການດຳເນີນທຸລະກິດ 5-10 ປີ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າ ອັນນິສາ ໂຊດພົມມະອານັນ .(2014). ຄຸນລັກສະນະຂອງຜູ້ປະກອບການທີ່ມີຕໍ່ຄວາມສຳເລັດໃນການດຳເນີນທຸລະກິດຂອງຜູ້ປະກອບການຮ້ານຄ້າໃນຕະຫຼາດນ້ຳ ຜູ້ຕອບແບບສອບຖາມສ່ວນຫຼາຍເປັນເພດຍິງ ມີຈຳນວນ200 ກຸ່ມຕົວຢ່າງ, ມີອາຍຸຊ່ວງ 30-40ປີ, ມີລະດັບການສຶກສາປະລິນຍາຕີ, ມີໄລຍະການດຳເນີນທຸລະກິດ 1-5 ປີ, ວະໄລລັກ ອິນທະສິດ ແລະ ສຸດາລັດ ຜິວໂສດາລິດ .(2023). ປັດໃຈທີ່ມີອິດທິພົນຕໍ່ການຕັດສິນໃນເລີ່ມຂາຍເຄື່ອງອອນລາຍຂອງເພດຍິງກໍລະນີສຶກສາ: ນະຄອນຫຼວງວຽງຈັນ ພົບວ່າຜູ້ຕອບແບບສອບຖາມເປັນເພດຍິງ ແລະ ເປັນຜູ້ປະກອບການທີ່ດຳເນີນທຸລະກິດດ້ວຍແຫຼ່ງທຶນຕົນເອງ.

ດ້ານຄວາມເປັນຕົວຂອງຕົນເອງເຫັນວ່າ:ທ່ານສາມາດຕັດສິນໃຈໃນການດຳເນີນງານໄດ້ຢ່າງເປັນອິດສະລະດ້ວຍຕົວເອງ, ສາມາດເຮັດວຽກໄດ້ດ້ວຍຕົວເອງ ແລະສາມາດຕັດສິນໃຈໄດ້ໃນພາວະກົດດັນ, ການເຮັດທຸລະກິດບໍ່ວ່າຈະໄດ້ກຳໄລຫຼືຂາດທຶນຂຶ້ນຢູ່ກັບຄວາມຄິດຄວາມສາມາດຂອງຕົວທ່ານເອງ, ສາມາດຕັດສິນໃຈແກ້ບັນຫາ ແລະ ປະເຊີນໜ້າກັບສະຖານະການຕ່າງໆດ້ວຍຕົວທ່ານເອງ ແລະ ຜ່ານວິກິດເຫດການຕ່າງໆມາໄດ້ດ້ວຍຄວາມສາມາດຂອງຕົວທ່ານເອງ ເຊິ່ງສອດຄ່ອງກັບງານວິໄຈຂອງ ເດີ່ນ ອິນທະວົງ ແລະ ບຸນສຸກ ສົມປະເສີດ (2021) ຄວາມຕັ້ງໃຈ ແລະ ຄວາມສາມາດທີ່ຈະເປັນຜູ້ປະກອບການຂອງນັກສຶກສາ ພາກວິຊາບໍລິຫານທຸລະກິດ ລະດັບຄວາມຕັ້ງໃຈໃນການເປັນຜູ້ປະກອບການແມ່ນມີຄ່າສະເລ່ຍຫຼາຍທີ່ສຸດທີ່ຈະສ້າງທຸລະກິດສ່ວນພາຍຫຼັງສຳເລັດການສຶກສາເພາະຕ້ອງການອິກສະຫຼະພາບໃນການຕັດສິນໃຈດ້ວຍຕົນເອງ ຢູ່ໃນລະດັບຄວາມຕັ້ງໃຈຫຼາຍ.ພົບວ່າຄວາມເປັນຕົວຂອງຕົນເອງສົ່ງຜົນກັບຄວາມເປັນຜູ້ປະກອບການຍິງເພາະສະແດງໃຫ້ເຫັນເຖິງການຕັດສິໃຈດ້ວຍຕົນເອງ, ພາວະກົດດັນ, ແກ້ໄຂບັນຫາ ແລະ ຜ່ານວິກິດການຕ່າງໆ.

ດ້ານຄວາມອົດທົນເຫັນວ່າ:ມີຄວາມກະຕືລືລົ້ນທີ່ຈະເຮັດວຽກໃຫ້ປະສົບຜົນສຳເລັດ, ທ່ານມີຄວາມພະຍາຍາມທີ່ຈະຜ່ານຜ່າອຸປະສັກເພື່ອໄປສູ່ເປົ້າໝາຍ, ພ້ອມທີ່ຈະຕໍ່ສູ້ເຖິງແມ່ນວ່າຈະມີອຸປະສັກຫຼາຍປານໃດກໍ່ຕາມ, ພ້ອມທີ່ຈະເຮັດວຽກໃຫ້ສຳເລັດໂດຍບໍ່ຄຳນຶງເຖິງເວລາ ສອດຄ່ອງກັບງານວິໄຈ ບຸນໄຊ ທຳມະວົງ, ຢົວເຮີ ຊົ່ງເຈ່ຍ ແລະ ໄມຫວ່າງ (2018) ການປະກອບການຂອງຮ້ານຂາຍເຄື່ອງກອງບຸນໃນເມືອງ ຈັນທະບູລີ ແລະ ສີສັດຕະນາກ ພົບວ່າດ້ານຄວາມອົດທົນສົ່ງຜົນຕໍ່ຄຸນລັກສະນະຂອງຜູ້ປະກອບການ ສະແດງໃຫ້ເຫັນເຖິງກະຕືລືລົ້ນ ແລະ ຄວາມພະຍາຍາມ.

ດ້ານຄວາມກ້າສ່ຽງເຫັນວ່າ: ກ້າໃຊ້ຊັບສິນຈຳນວນຫຼາຍໃນການປະກອບທຸລະກິດ, ມີຄວາມພະຍາຍາມທີ່ຈະຜ່ານຜ່າອຸປະສັກເພື່ອໄປສູ່ເປົ້າໝາຍ, ພ້ອມທີ່ຈະຕໍ່ສູ້ເຖິງແມ່ນວ່າຈະມີອຸປະສັກຫຼາຍປານໃດກໍ່ຕາມ, ພ້ອມທີ່ຈະເຮັດວຽກໃຫ້ສຳເລັດໂດຍບໍ່ຄຳນຶງເຖິງເວລາ ສອດຄ່ອງກັບງານວິໄຈ ວັນວິສາ ໂຊດພົມມະອານັນ (2014) ຄຸນລັກສະນະຂອງຜູ້ປະກອບການທີ່ມີຕໍ່ຄວາມສຳເລັດໃນການດຳເນີນທຸລະກິດຂອງຜູ້ປະກອບການຮ້ານຄ້າໃນຕະຫຼາດນ້ຳ ຄຸນລັກສະນະລັກຂອງຜູ້ປະກອບການແມ່ນມີຄວາມເອົາໃຈໃສ່ເພື່ອໃຫ້ຕົນເອງປະສົບຜົນສຳເລັດ, ປັບຕົວຕາມສະຖານະການ, ກ້າທີ່ຈະສ່ຽງ ແລະ ລົງທຶນ ໃນບາງຄັ້ງ ພົບວ່າດ້ານຄວາມກ້າສ່ຽງ ສົ່ງຜົນຕໍ່ຄຸນລັກສະນະຂອງຜູ້ປະກອບການຍິງໃຫ້ປະສົບຜົນສຳເລັດ.

ດ້ານການສັງເກດການໄກເຫັນວ່າ: ມັກຈະວິເຄາະແລະວາງແຜນອະນາຄົດຂອງທຸລະກິດທີ່ທ່ານດຳເນີນຢູ່ໃນປະຈຸບັນເຊັ່ນ:ຄູ່ແຂ່ງ, ອຸປະສັກ, ໂອກາດ, ລວມທັງໃນອະນາຄົດ, ມັກຈະເປັນທີ່ຍອມຮັບຂອງລູກນ້ອງ ແລະຜູ້ຮູ້ຈັກ ວ່າສາມາດຮູ້ການວາງແຜນໃນອະນາຄົດໄດ້ເປັນຢ່າງດີ ສອດຄ່ອງກັບງານວິໄຈຂອງ ພູມິນ ໄຊຍະຈັກ (2016) ການບໍລິຫານຂອງຜູ້ປະກອບກິດຈະການ ວິຫາສະກິດຂະໜາດນ້ອຍ ແລະ ຂະໜາດກາງ ປັດໄຈທີ່ມີຜົນສຳລັດຕໍ່ການດຳເນີນທຸລະກິດມີການຈັດການ, ການຜະລິດ, ການຕະຫຼາດ ແລະ ການເງິນການບັນຊີ ພົບວ່າ ດ້ານການສັງເກດການໄກສົ່ງຜົນຕໍ່ຄຸນລັກສະນະຂອງຜູ້ປະກອບການຍິງທີ່ປະສົບຜົນສຳເລັດ.

ດ້ານຄວາມສະໝ່ຳສະເໝີໃນການຮຽນຮູ້ເຫັນວ່າ: ມີການຄົ້ນຄວ້າຫຼືສຶກສາຫາຄວາມຮູ້ເພີ່ມເຕີມຢູ່ສະເໝີ, ນຳຂໍ້ຜິດພາດໃນອະດີດມາເປັນປະສົບການໃນການຮຽນຮູ້, ມີຄວາມເຊື່ອໝັ້ນບໍ່ຫວັ່ນໄຫວກັບສະຖານະການຫຼືຄວາມຜິດພາດທີ່ເກີດຂຶ້ນ, ສາມາດຊອກຫາແຫຼ່ງທຶນ, ການຮ່ວມມື ແລະ ການແຂ່ງຂັນ, ມີຄວາມຮູ້ຄວາມຊຳນານແລະມີຄວາມມຸ່ງໝັ້ນຕໍ່ເປົ້າໝາຍ ສອດຄ່ອງກັບງານວິໄຈ ຄຳເກີດ ພົມມະຈັນ ແລະ ມະລິສາ ຄັນທະວົງ (2022) ຄຸນລັກສະນະຂອງຜູ້ປະກອບການທີ່ມີຜົນຕໍ່ຄວາມສຳເລັດໃນການດຳເນີນທຸລະກິດຮ້ານຂາຍຊີ້ນສົດກໍລະນີສກສາ: ຮ້ານ CP Fresh Shop ໃນນະຄອນຫຼວງວຽງຈັນ ພົບວ່າຄວາມສະໝ່ຳສະເໝີໃນການຮຽນຮູ້ສົ່ງຜົນກັບຄວາມເປັນຜູ້ປະກອບການຍິງເພາະສະແດງໃຫ້ເຫັນເຖິງ ສຶກສາຫາຄວາມຮູ້, ນຳຂໍ້ຜິດພາດມາເປັນປະສົບການ ແລະ ມີຄວາມເຊື່ອໝັ້ນບໍ່ຫວັ່ນໄຫວຕໍ່ຂໍ້ຜິດ ພາດ.

ດ້ານຄວາມເປັນຜູ້ນຳເຫັນວ່າ: ມີຄວາມຕ້ອງການພັດທະນາຕົນເອງຢູ່ເລື້ອຍໆ, ຈະຄິດຫາວິທີແກ້ໄຂບັນຫາຈົນສຳເລັດສະເໝີ, ຮູ້ຈັກບໍລິຫານເວລາແລະ

ບໍລິຫານການເງິນ, ມີຄວາມຄິດສ້າງສັນ,ຊອກຮູ້ສິ່ງ ໃໝ່ໆ,ວິໄສທັດກວ້າງໄກ, ມີຄວາມເປັນຜູ້ນໍາ,ກ້າປະເຊີນບັນຫາ ແລະ ຮູ້ຈັກແກ້ສະຖານນະການປ່ຽນວິກິດໃຫ້ເປັນໂອກາດ, ຈະມັກຕັດສິນໃຈໂດຍຄິດເຖິງຜົນໄດ້ຮັບຜົນເສຍຢູ່ສະເໝີ, ມັກຈະລວບລວມຂໍ້ມູນຕ່າງໆເພື່ອປະກອບໃນການຕັດສິນໃຈ ແລະ ມີຄວາມສາມາດ ແລະ ມີຄວາມເປັນຜູ້ນໍາເຊັ່ນ:ມີຄວາມຮັບຜິດຊອບຕໍ່ນ້າທີ່ວຽກງານ ຍອມຮັບຄວາມຄິດເຫັນຂອງລູກນ້ອງແລະເປັນທີ່ຍອມຮັບຂອງລູກນ້ອງສອດຄ່ອງກັບງານວິໄຈ ນັດທະນາລີ ປີຕິທະນາການ (2017) ລັກສະນະຂອງຜູ້ປະກອບການທີ່ມີຜົນກະທົບຕໍ່ຄວາມສໍາເລັດຜູ້ປະກອບການທຸລະກິດ ໂຮງແຮມສາມດາວ ຄຸນລັກສະນະຂອງຜູ້ປະກອບການທີ່ມີຜົນຕໍ່ຄວາມສໍາເລັດໃນການເປັນຜູ້ປະກອບການເຫັນວ່າຄວາມມຸ່ງໝັ້ນຕໍ່ຄວາມສໍາເລັດ, ການຮຽນຮູ້ ແລະການພັດທະນາຕົນເອງ, ຄວາມຄິດສ້າງສັນ, ຄວາມສາມາດໃນການແຂ່ງຂັນ, ຄວາມເປັນຕົວຂອງຕົນເອງ ແລະ ຄວາມກ້າສ່ຽງ ພົບວ່າດ້ານຄວາມເປັນຜູ້ນໍາສົ່ງຜົນຕໍ່ຄຸນລັກສະນະຂອງຜູ້ປະກອບການຍິງ.

**ສະຫຼຸບຜົນການຄົ້ນຄວ້າ**

ຜ່ານການຄົ້ນຄວ້າສຶກສາຂອງຄຸນລັກສະນະຜູ້ປະກອບການຍິງທີ່ປະສົບຜົນສໍາເລັດ ເຊິ່ງມີ 2 ຈຸດປະສົງ: ສະພາບລວມຂອງຜູ້ປະກອບການຍິງທີ່ມີຜົນຕໍ່ກັບການປະສົບຜົນສໍາເລັດໃນການເຮັດທຸລະກິດ , ສຶກສາຄຸນລັກສະນະຂອງຜູ້ປະກອບການເພດຍິງທີ່ມີຜົນຕໍ່ກັບຄວາມສໍາເລັດໃນການປະກອບທຸລະກິດ ສາມາດສະຫຼຸບໄດ້ດັ່ງນີ້: ແບບພັນລະນາ ແລະ ແບບປະລິມມາ ໂດຍ ນໍາໃຊ້ໂປຣແກຣມ SPSS version 26 ໂດຍນໍາໃຊ້ທາງສະຖິຕິນໍາໃຊ້ວິທີຜັນປ່ຽນ One-way ANOVA ແລະ LSD. ຈາກການສຶກສາໃນຄັ້ງນີ້ເຫັນວ່າມີ ກຸ່ມຕົວຢ່າງຈໍານວນ 201 ຕົວຢ່າງ ຜູ້ຕອບຕອບແບບສອບຖາມເປັນເພດຍິງ, ມີອາຍຸຊ່ວງລະຫວ່າງ 31-40ປີ ກວມເອົາ 28.9 ສ່ວນຮ້ອຍ, ມີລະດັບການສຶກສາປະລິນຍາຕີ ກວມເອົາ 44.8 ສ່ວນຮ້ອຍ, ມີສະຖານະແຕ່ງງານ ກວມເອົາ 78.6 ສ່ວນຮ້ອຍ, ສະຖານທີດໍາເນີນທຸລະກິດເມືອງ ສີໂຄດຕະບອງ ກວມເອົາ 39.8 ສ່ວນຮ້ອຍ, ມີທຶນຈົດທະບຽນຕໍ່າກວ່າ 100.000.000ກີບ ກວມເອົາ 39.8 ສ່ວນຮ້ອຍ, ມີແຫຼ່ງເງິນທຶນຕົນເອງ ກວມເອົາ 80.1 ສ່ວນຮ້ອຍ, ໄລຍະເວລາດໍາເນີນທຸລະກິດ 5-10ປີ ກວມເອົາ 33.3 ສ່ວນຮ້ອຍ, ມີລາຍຮັບຕໍ່ເດືອນ 10.000.000-50.000.000ກີບ ກວມເອົາ 33.3 ສ່ວນຮ້ອຍ, ມີລາຍຈ່າຍຕໍ່ເດືອນ 10.001.000-50.000.000ກີບ ກວມເອົາ 38.3 ສ່ວນຮ້ອຍ, ມີພະນັກງານ 1-5ຄົນ ກວມເອົາ 74.6 ສ່ວນຮ້ອຍ ແລະ ການເຂົ້າຮ່ວມອົບຮົມ ແມ່ນບໍ່ເຄີຍ ກວມເອົາ 74.6 ສ່ວນຮ້ອຍ.

ຜູ້ຕອບແບບສອບຖາມໃຫ້ຄວາມສໍາຄັນກ່ຽວກັບຄຸນລັກສະນະຂອງແມ່ຍິງທີ່ມີຜົນຕໍ່ຄວາມສໍາເລັດໃນການປະກອບທຸລະກິດດັ່ງນີ້: ດ້ານຄວາມເຊື່ອໝັ້ນໃນຕົນເອງ ຢູ່ໃນລະດັບຄວາມສໍາຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.64, ດ້ານຄວາມອົດທົນ ຢູ່ໃນລະດັບຄວາມສໍາຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.71, ດ້ານຄວາມກ້າສ່ຽງ ຢູ່ໃນລະດັບຄວາມສໍາຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.65, ດ້ານການສັງເກດການໄກ ຢູ່ໃນລະດັບຄວາມສໍາຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.50, ດ້ານຄວາມສະໝໍ່າສະເໝີ ແລະ ມຸ່ງໝັ້ນໃນການຮຽນຮູ້ ຢູ່ໃນລະດັບຄວາມສໍາຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.74 ແລະ ດ້ານຄວາມເປັນຜູ້ນໍາ ຢູ່ໃນລະດັບຄວາມສໍາຄັນຫຼາຍທີ່ສຸດ ໂດຍຄ່າສະເລ່ຍ 4.74.

**ຜົນທົດສອບສົມມຸດຖານ**

ອາຍຸທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການແຕກຕ່າງກັນໃນດ້ານຄວາມເປັນຕົວຂອງຕົນເອງ, ດ້ານຄວາມອົດທົນ, ດ້ານຄວາມກ້າສ່ຽງ, ດ້ານສັງເກດການໄກ, ດ້ານຄວາມສະໝໍ່າສະເໝີໃນການຮຽນຮູ້ ແລະ ດ້ານຄວາມເປັນຜູ້ນໍາ ຢູ່ທີ່ລະດັບຄວາມສໍາຄັນ sig$<\alpha = 0.05$

ລະດັບການສຶກສາທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການແຕກຕ່າງກັນໃນດ້ານຄວາມເປັນຕົວຂອງຕົນເອງທີ່ລະດັບຄວາມສໍາຄັນ sig$<\alpha = 0.05$

ສະຖານະພາບທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການບໍ່ແຕກຕ່າງກັນທຸກດ້ານ

ແຫຼ່ງເງິນທຶນທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການບໍ່ແຕກຕ່າງກັນທຸກດ້ານ

ໄລຍະດຳເນີນທຸລະກິດທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການແຕກຕ່າງກັນໃນດ້ານຄວາມເປັນຕົວຂອງຕົນເອງ, ດ້ານຄວາມອົດທົນ, ດ້ານຄວາມກ້າສ່ຽງ, ດ້ານສັງເກດການໄກ, ດ້ານຄວາມສະໝ່ຳສະເໝີໃນການຮຽນຮູ້ ແລະ ດ້ານຄວາມເປັນຜູ້ນຳ ທີ່ລະດັບຄວາມສຳຄັນ sig<$\alpha$ = 0.05

ການເຂົ້າຮ່ວມຝຶກອົບຮົມທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບຄຸນລັກສະນະຂອງຜູ້ປະກອບການບໍ່ແຕກຕ່າງກັນທຸກດ້ານ

**ຂໍ້ສະເໜີແນະ**

ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໃຫ້ຜູ້ປະກອບການຄວນມີການພັດທະນາຕົນເອງຢູ່ເລື້ອຍໆ ຊອກຫາວິທີທີ່ຈະແກ້ໄຂບັນຫາໃຫ້ໄວທັນຖ່ວງເວລາເຫດການນັ້ນ, ຮູ້ຈັກບໍລິຫານເວລາ ແລະ ບໍລິຫານການເງິນໃຫ້ເໝາະສົມກັບສະພາບເສດຖະກິດໃນປັດຈຸບັນ,ຮຽນຮູ້ທັກສະໃໝ່ໆຮຽນຮູ້ຂໍ້ມູນຂ່າວສານໃນເສດຖະກິດ ແລະ ຮູ້ໃຊ້ເທັກໂນໂລຊີເພື່ອນຳໃຊ້ໃນທຸລະກິດຂອງຕົນເອງ.

**ເອກະສານອ້າງອີງ**


ການພິດຊາ ກອງຄົນຂວາ ແລະ ຄະນະ. (2021). *ປັດໄຈເຊີງສາເຫດຕໍ່ການບໍລິຫານໜີ້ສິນສ່ວນບຸກຄົນຂອງກຸ່ມໄວເຮັດວຽກໃນຊ່ວງການລະບາດຂອງພະຍາດໂຄວິດ-19.* ພະເຢົາ, ປະເທດໄທ: ວາລະສານວິທະຍາໄລ, ຄະນະບໍລິຫານທຸລະກິດ ແລະ ນິເທດສາດ, ມະຫາວິທະຍາໄລພະເຢົາ.

ສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ. (2021). *ບົດປະເມີນສະພາບເສດຖະກິດໃນທ້າຍປີ 2021 ແລະ ທ່າອ່ຽງໃນປີ 2022.* ນະຄອນຫຼວງວຽງຈັນ, ປະເທດລາວ: ສະຖາບັນຄົ້ນຄວ້າວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ.

ສີລິນທອນພະໄຊຍະວົງ ຄຳມະນີ ໄຊຍະສຸກ. (2020). *ປັດໄຈທີ່ມີຜົນຕໍ່ຄວາມຕັ້ງໃຈໃນການເປັນຜູ້ປະກອບການທຸລະກິດ Business-Startup ຂອງນັກສຶກສາປີທີ 2 ຫາ ປີທີ 4 ສົກສຶກສາ 2019-2020 ພາກວິຊາບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາ ໄລແຫ່ງຊາດ.* ນະຄອນຫຼວງວຽງຈັນ: ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ.

ສີລິນທອນພະໄຊຍະວົງ ຄຳມະນີໄຊຍະສຸກ ແລະ. (2020). *ປັດໄຈທີ່ມີຜົນຕໍ່ຄວາມຕັ້ງໃຈໃນການເປັນຜູ້ປະກອບການທຸລະກິດ Business-Startup ຂອງນັກສຶກສາປີທີ 2 ຫາ ປີທີ 4 ສົກສຶກສາ 2019-2020 ພາກວິຊາບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ.* ນະຄອນຫຼວງວຽງຈັນ: ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ.

ສຸພາພັດແກ້ວບັນດິດແລະສຸກສາຄອນຈັນທະວີໄຊ. (2013). *ສຶກສາຄວາມສົນໃຈຂອງຜູ້ປະກອບການທຸລະກິດນີບີນາກຕໍ່ກັບເງິນໝູນວຽງຂອງທະນະຄານການຄ້າຕ່າງປະເທດລາວກໍລະນີສຶກສາ: ເມືອງສີສັດຕະນາກ.* ນະຄອນຫຼວງວຽງຈັນ: ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ.

ສຸວິມົນມະທຸລົດ. (2020). *ປັດໄຈຄວາມສຳເລັດຂອງຜູ້ປະກອບການທຸລະກິດຂະໜາດກາງ ແລະ ຂະໜາດຍ່ອຍ.* ກຸງເທບ: ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລລັງສິດ.

ວິຣິຍະສັກ ສີສຸພັນທອງ ພ້ອມດ້ວຍຄະນະ. (ເລກທີ. ວັນທີ.). *ເສດຖະມິຕິ 1.* ມະຫາວິທະຍາໄລແຫ່ງຊາດ: ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ.

ວັນນິສາໂຊດພົມມະອານັນ. (2014). *ຄຸນລັກສະນະຂອງຜູ້ປະກອບການທີ່ມີຕໍ່ຄວາມສຳເລັດໃນການດຳເນີນທຸລະກິດຂອງຜູ້ປະກອບການຮ້ານຄ້າໃນຕະຫຼາດນ້ຳ.* ຈັງຫວັດ ນະຄອນພະນົມ: ສາຂາວິຊາການຈັດການພາກລັດ ແລະ ເອກະຊົນ, ມະຫາວິທະຍາໄລສົນລະປາກອນ.

ອູ່ຄຳ ສີສຸພົນທ໌ ພ້ອມດ້ວຍຄະນະ. (2016). *ຫຼັກການສະຖິຕິ.* ມະຫາວິທະຍາໄລແຫ່ງຊາດ: ໂຮງພິມມັນທາຕຸລາດ.

ເກວະຣິນ ເຣີກດຳເນີນກິດ. (2021). *ປັດໄຈທີ່ມີຜົນຕໍ່ການກໍ່ໜີ້ໃນຊ່ວງສະຖານະການ COVID-19 ຂອງບຸກຄະລາກອນເທດສະບານເມືອງບ້ານບຶງ ຈັງຫວັດຊົນບຸຣີ.* ກຸງເທບມະຫານະຄອນ, ປະເທດໄທ: ມະຫາວິທະຍາໄລຣາມຄຳແຫງ.

abel, taylor Lusis. (2020). Covid-19, stay at home and employment: evidence from CPS data. *University of ottawa* , 1-110.

D. J. Lawrence, J. G. Michael. (2008). *Planning Your Personal Finances.* Ohio: Thomson South-Western.

F Modigliani. (1996). *The European unemployment crisis: a monetarist-Keynesian approach and its implications.* Tinbergen and Modern Economics: The Noble Economist Saint.

McClelland. (1953). *ທິດສະດີກ່ຽວກັບປັດໃຈຂອງຄວາມສຳເລັດ.*

Milton Fredman. (1957). *A theory of the consumption function.*

Moore,Petty and Palich. Hatten Longenecker. (2006). *ທິດສະດີກ່ຽວກັບຜູ້ປະກອບການ.*

Rosidah Luebaesa. (2011). *ພາວະໜີ້ສິນຂອງຄົວເຮືອນຊາວກະສິກອນ.* ອຳເພີຣະຍັງ, ຈັງຫວັດປັດຕານີ, ປະເທດໄທ: ບົດວິທະຍານິພົນຈົບຊັ້ນປະລິນຍາໂທ, ມະຫາວິທະຍາໄລສົງຂຣາຄຣິນ.

S. James, P. Louis, K. Richard, E. & Rajiv, S. Sananthan. (2020). Economic impact of COVID-19 on a High-Volume Academic Neurosurgical Practice. *World Neurosurgery*, 143.

*University of Massachusetts Amherst, Political Economy Research Instuitute.* (2008). ເອົາມາ The Relative Income Theory of Consumption: A Synthetic Keynes-Duesenberry-FriedmanModel: https://scholarworks.umass.edu/peri_workingpapers/140/